# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 26 ຕຸລາ 2008 (10-26-2008)

## <u>ພຣະວິນຍານບໍຣິສຸດສຳຄັນຕໍ່ຊີວິດທີ່ບໍຣິສຸດ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຣມ 8 : 5 – 17, 26 - 27

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?</u>**

ບົດຮຽນນີ້ສາມາດຊ່ວຍທ່ານໃຊ້ຊີວິດຢ່າງບໍຣິສຸດໄດ້ໂດຍ ການເອົາໃຈໃສ່ໃນສິ່ງທີ່ເປັນພຣະວິນຍານຂອງພຣະເຈົ້າ ແທນທີ່ຈະມົວສຸມໃຈໃສ່ໃນສິ່ງຂອງທີ່ເປັນຄວາມປາດຖນາຂອງຕົນເອງ. ມາເປັນການທີ່ຊອບພຣະທັຍຂອງພຣະເຈົ້າ ແລະມີຊີວິດຢູ່ເພື່ອພຣະອົງ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ທ່ານອາຈານໂປໂລໄດ້ພົບຄຳຕອບຊີວິດຝ່າຍຈິດວິນຍານທີ່ມີການຕໍ່ສູ້ໃນການທຳງານຂອງພຣະວິນຍານບໍຣິສຸດໃນຊີວິດຂອງທ່ານ,ພຣະວິນຍານບໍຣິສຸດໄດ້ນຳພາຄວາມຄິດຄວາມຕັ້ງໃຈ, ນ□າພາທ່ານໃຫ້ດຳລົງຊີວິດຢູ່ໃນຄວາມ ບໍຣິສຸດ
ເຕືອນສະຕິທ່ານໃຫ້ດຳລົງຢູ່ແລະເປັນທີ່ຊອບພຣະທັຍຂອງພຣະເຈົ້າ,ແລະຊ່ວຍເຫຼືອທ່ານໃນຄຳອ້ອນວອນຂອງເພິ່ນ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:</u>**

ທ່ານ "ທອມ" ( Tom ) ໄດ້ຟັງດ້ວຍຄວາມຕັ້ງອົກຕັ້ງໃຈຂະນະທີ່ "ທ່ານ ແຈັກ "ໄດ້ແບ່ງປັນກ່ຽວກັບເຣື່ອງພຣະວິນຍານບໍຣິສຸດ. ທ່ານ " ແຈັກ " ຈະເວົ້າແນວໃດກໍຕາມ. " ທ່ານ ທອມ " ຮູ້ສຶກຢ້ານກົວແຕ່ການສັບສົນ, ໃນຄວາມບາບຫຼາຍໆສິ່ງໃນນິສັຍແລະມີຄວາມຮູ້ສຶກຍອມແພ້ທີ່ຈະເອົາຊະນະກັບມັນໄດ້."ທ່ານ ແຈັກ" ບໍ່ໄດ້ເປັນຜູ້ທີ່ດີພ້ອມທຸກຢ່າງ ແຕ່ລາວເວົ້າຢ່າງມີນ້ຳໜັກກ່ຽວກັບພຣະວິນຍານບໍຣິສຸດ. ໄດ້ໃຫ້ຄວາມສາມາດກັບລາວທີ່ຈະເອົາຊະນະບັນຫາຕ່າງໆ. " ທ່ານ ທອມ " ໄດ້ຮູ້ເຖິງຄວາມຮູ້ຄວາມສະຫລາດວ່າພຣະວິນຍານບໍຣິສຸດແມ່ນຢູ່ໃນຊີວິດຂອງລາວ. ແຕ່ລາວບໍ່ມີຄວາມຊຳນິຊຳນານໃນຣິດອຳນາດຂອງພຣະວິນຍານບໍຣິສຸດ,ທ່ານມີຄວາມເຫັນພ້ອມກັບ "ທ່ານທອມຫຼືທ່ານແຈັກ" ດ້ວຍເຫດຜົນໃດ ? ດັ່ງທ່ານ ທອມ,ພວກເຮົາບໍ່ສາມາດໃຊ້ຊີວິດຄຣິສຕຽນຕາມໃຈຕົນເອງ. ຂ່າວດີແມ່ນພຣະວິນຍານບໍຣິສຸດຂອງພຣະເຢຊູຄຣິດຢູ່ນຳຜູ້ທີ່ເຊື່ອ, ໂດຍໄວ້ວາງໃຈແລະຍອມຢູ່ໃຕ້ພຣະວິນຍານບໍຣິສຸດ.ພວກເຮົາສາມາດຮູ້ທີ່ຈະມີຄວາມຊົມຊື່ນຍິນດີຂອງຄວາມບໍຣິສຸດ. ເຕັມໄປດ້ວຍພຣະວິນຍານບໍຣິສຸດ.

1.**<u>ພຣະວິນຍານຂອງພຣະເຈົ້າປ່ຽນຄວາມຄິດເຮົາ</u>** ( ໂຣມ 8:5–9 )

ບັນຫາຂອງ" ທ່ານ ທອມ "ແລະພວກເຮົາ,ແມ່ນກຳລັງຄິດວ່າລາວສາມາດມີຊີວິດຢູ່ໄດ້ດ້ວຍອາສັຍຕົນເອງ ດ້ວຍເຫດໃດມີຄຣິສຕຽນຫຼາຍຄົນໄດ້ພະຍາຍາມທີ່ຈະມີຊີວິດຢູ່ໂດຍອາສັຍຕົນເອງ ? ທ່ານເດ,ອັຄສາວົກໂປໂລໄດ້ເວົ້າວ່າຖ້າເຮົາທັງຫຼາຍດຳລົງຊີວິດຕາມຝ່າຍເນື້ອໜັງ. ໃນການຂຽນຂອງທ່ານອາຈານໂປໂລໃນຄຳເວົ້າວ່າເນື້ອໜັງ ຕາມປົກກະຕິແລ້ວແມ່ນເວົ້າເຖິງໃນຈິດໃຈ.ແລະເປັນການສະແດງອອກຈາກພຣະຄຸນຂອງພຣະເຈົ້າ,ທ່ານອາຈານໂປໂລໄດ້ຈຳແນກບຸກຄົນທີ່ດຳລົງຊີວິດຕາມແບບເນື້ອໜັງຢ່າງມະນຸດທຳມະດາ ຈາກພວກທີ່ດຳເນີນຊີວິດຕາມແບບຝ່າຍພຣະວິນ

ຍານ ທ່ານໄດ້ປຽບທຽບໃຫ້ພວກເຂົາເຫັນວ່າສິ່ງປັກໃຈຢູ່ກັບເນື້ອໜັງກໍຄືຄວາມຕາຍ ແລະສິ່ງທີ່ປັກໃຈຢູ່ກັບພຣະວິນຍານກໍຄືຊີວິດແລະສັນຕິສຸກ. ປົກກະຕິແລ້ວຄົນຜູ້ນຶ່ງຈະປັກໃຈໃສ່ດ້ານໃດດ້ານນຶ່ງມັນກໍ່ສຳແດງອອກໃຫ້ເຫັນໃນການດຳລົງຊີວິດຂອງລາວ. ຜູ້ທີ່ຕິດພັນຢູ່ກັບໂລກກໍເປັນຂອງໂລກ, ຄົນບາບມີແຕ່ພໍໃຈຕໍ່ຄວາມບາບຂອງເຂົາ ເຂົາບໍ່ເຄີຍຄິດໃນສິ່ງທີ່ເປັນຜົນສະທ້ອນໃນຊີວິດຂອງເຂົາ.

ໃນທາງກົງກັນຂ້າມ ຜູ້ທີ່ໃຊ້ຊີວິດຝ່າຍວິນຍານກໍ່ປັກຕາໃສ່ແຕ່ສິ່ງທີ່ເປັນຂອງຝ່າຍວິນຍານ.ຜູ້ທີ່ບັງເກີດໃໝ່ກໍເອົາໃຈໃສ່ອັນໃດເປັນນ້ຳພຣະທັຍຂອງພຣະເຈົ້າ. ແມ່ນສິ່ງໃດທີ່ປົກຄຸມຈິດໃຈຂອງເຂົາ? ເຂົາກໍຈະທຸ້ມເທເວລາກັບກຳລັງຂອງເຂົາເພື່ອສິ່ງເຫຼົ່ານັ້ນ.ເຂົາຈະຍອມຮັບໃຊ້ຜູ້ໃດ? ຂຶ້ນຢູ່ກັບວ່າເຂົາແມ່ນຜູ້ໃດ?ເຂົາຢູ່ຝ່າຍເນື້ອໜັງຫຼືຝ່າຍວິນຍານ. ເຮົາວາງຈິດໃຈກັບສິ່ງຂອງອັນໃດເຮົາກໍ່ຈະໄດ້ຮັບສິ່ງນັ້ນ,ຄວາມຕາຍຫຼືຊີວິດແລະສັນຕິສຸກ.ຖ້າເຮົາໃສ່ໃຈກັບຝ່າຍເນື້ອໜັງກໍເປັນສັດຕູກັບພຣະເຈົ້າ, ຜູ້ໃດທີ່ບໍ່ມີພຣະເຢຊູຄຣິດເຂົາກໍຕໍ່ສູ້ກັບພຣະເຈົ້າເໝືອນກັນ. ຜູ້ທີ່ຮັກໂລກ, ຄວາມຄິດຂອງເຂົາກໍແມ່ນປົກຄຸມໂດຍຄວາມບາບ ເຂົາບໍ່ສາມາດເປັນທີ່ພໍພຣະທັຍພຣະເຈົ້າ,

ທ່ານອາຈານໂປໂລໄດ້ເວົ້າອີກວ່າຄົນທີ່ເຫັນປໂຍດສ່ວນຕົວກໍບໍ່ຢູໃນກົດພຣະບັນຍັດຂອງພຣະເຈົ້າ. ໂດຍທາງປົກກະຕິແລ້ວແມ່ນລາວເຮັດເພື່ອລາວເອງແທນທີ່ລາວຈະຍອມຈຳນົນໃຫ້ແກ່ພຣະເຈົ້າ.ລາວເຮັດເພື່ອຊື່ສຽງຂອງລາວແທນທີ່ລາວຈະເຮັດແທ່ນພຣະເຈົ້າຜູ້ທີ່ມີຄວາມເຊື່ອກໍມີແນວຄວາມຄິດທີ່ແຕກຕ່າງ ເພາະມີພຣະວິນຍານຢູ່ໃນເຂົາ, ເມື່ອພວກເຂົາຕ້ອນຮັບເອົາພຣະເຢຊູຄຣິດເປັນພຣະຜູ້ໂຜດ.ພຣະເຈົ້າໄດ້ໃຫ້ພຣະວິນຍານບໍຣິສຸດຢູ່ຖ້າມກາງພວກເຂົາຄຣິສຕຽນແມ່ນຜູ້ທີ່ມີພຣະວິນຍານ ນິສັຍໃຈຄໍກໍຈະອ່ຽງໄປຫາພຣະເຈົ້າ ກ່ອນຈະຫາຕົວເຂົາເອງແລ້ວກໍຫາຜູ້ອື່ນ ແລະກໍຫາຊີວິດທີ່ມີຄວາມແຕກຕ່າງເພາະວ່າອົງພຣະວິນຍານບໍຣິສຸດຊົງປ່ຽນແປງອຸປະນິສັຍຂອງເຂົາ.ແລະກໍໃສ່ໃຈຢູ່ຝ່າຍວິນຍານກໍຈະມີຊີວິດແລະສັນຕິສຸກ.ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດແລ້ວກໍບໍ່ແມ່ນຂອງພຣະຄຣິດ ພຣະວິນຍານບໍຣິສຸດຈະນຳໄປສູ່ຄວາມລອດພົ້ນ. ທ່ານອາຈານໂປໂລໄດ້ບອກວ່າບໍ່ມີຄວາມແຕກຕ່າງກັບພຣະວິນຍານຂອງພຣະເຈົ້າແລະພຣະວິນຍານຂອງພຣະຄຣິດ.ທັງສາມພຣະພາກແມ່ນເປັນອັນນຶ່ງອັນດຽວກັນເຊັ່ນ : ພຣະບິດາ , ພຣະບຸດ , ແລະພຣະວິນຍານບໍຣິສຸດ. ທັງສາມມີຄວາມກົມກຽວກັນກັບຄວາມລອດພົ້ນແລະຄວາມບໍຣິສຸດຂອງພວກເຮົາ
.

## 2.<u>ພຣະວິນຍານຂອງພຣະເຈົ້າເພີ້ມພລັງໃຫ້ແກ່ເຮົາ</u>: ( ໂຣມ ( 8:10-13 )

ພຣະວິນຍານບໍຣິສຸດກໍນຳພາຜູ້ທີ່ເຊື່ອບໍ່ໃຫ້ຢູ່ໃຕ້ຄວາມບາບ.ເຂົາໃຊ້ຊີວິດຢູ່ໃຕ້ຄວາມຊອບທັມ,ຂຶ້ນຢູ່ກັບການຊົງນຳຕາມພຣະປະສົງຂອງພຣະເຈົ້າດ້ວຍເຫດໃດ? ພວກເຮົາຍັງມີບັນຫາກັບຄວາມບາບອີກບໍ່? ເຖິງວ່າພວກເຮົາພົ້ນແລ້ວເນື້ອກາຍຜູ້ທີ່ເຊື່ອກໍຈະຕ້ອງຕາຍຢູ່ຍ້ອນຄວາມບາບ.ເພາະພວກເຮົາເປັນຄົນບາບຮ່າງກາຍຂອງເຮົາຈິ່ງຕາຍ.

ອາຈານໂປໂລຍັງເວົ້າອີກວ່າຖ້າພຣະເຢຊູຄຣິດຢູ່ໃນທ່ານ. ຫຼືວ່າພຣະຄຣິດຢູ່ໃນເຈົ້າແລ້ວເພາະວ່າພຣະຄຣິດໄດ້ທຳງານຜ່ານຊີວິດຂອງເຮົາດ້ວຍພຣະວິນຍານບໍຣິສຸດ,ພຣະວິນຍານບໍຣິສຸດຈະໃຫ້ມີຊີວິດດ້ວຍຄວາມຊອບທັມເຖິງແມ່ນວ່າຮ່າງກາຍຈະຕາຍດ້ວຍຄວາມບາບ, ຄວາມຊອບທັມນີ້ບໍ່ແມ່ນຄວາມດີຂອງມະນຸດແຕ່ເປັນຄວາມຊອບທັມຂອງພຣະຄຣິດ. ອາຈານໂປໂລໄດ້ຢືນຢັນວ່າເຖິງແມ່ນວ່າຜູ້ທີ່ເຊື່ອຈະຕ້ອງຕາຍທາງຮ່າງກາຍ ( ພຣະວິນຍານບໍຣິສຸດຈະນຳພາຊີວິດກັບຄືນ ) .

ແຕ່ການສະຖິດຢູ່ນຳຂອງພຣະວິນຍານບໍຣິສຸດຈະນຳເຂົາຄືນມີຊີວິດອີກ ຄຳເວົ້າຂອງອາຈານໂປໂລແມ່ນສຳຄັນຫຼາຍ. ພຣະວິນຍານບໍຣິສຸດທີ່ທຳງານໃນຜູ້ທີ່ເຊື່ອແມ່ນພຣະວິນຍານຂອງພຣະເຈົ້າຜູ້ຊຶ່ງຊົງບັນດານໃຫ້ພຣະເຢຊູຄຣິດເປັນຄືນມາຈາກຕາຍ,ເ ພາະສະນັ້ນພຣະອົງຜູ້ຊົງເຮັດໃຫ້ພຣະຄຣິດຊົງຄືນມາຈາກຕາຍຈະເຮັດໃຫ້ຜູ້ທີ່ເຊື່ອມີຊີວິດແລະດ້ວຍຣິດອຳນາດອັນດຽວກັນ.

ດ້ວຍຄຳເວົ້າມາຈາກຂ້າງເທິງນີ້ ອາຈານໂປໂລເຍືອງໃຫ້ເຫັນວ່າຄຣິສຕຽນຄວນດຳເນີນຊີວິດຢ່າງຖືກຕ້ອງທຸກໆວັນ.ເພື່ອຈະໄດ້ພຣະພອນຈາກພຣະວິນຍານບໍຣິສຸດ ທ່ານໄດ້ໃຊ້ຄຳວ່າພີ່ນ້ອງມີຄວາມໝາຍວ່າຜູ້ທີ່ເຊື່ອໃນອົງ

ພຣະຄຣິດ.ເພາະວ່າການທຳງານຂອງພຣະວິນຍານຜູ້ທີ່ເຊື່ອບໍ່ໄດ້ຜູກມັດຢູ່ໃນເນື້ອກາຍຂອງເຂົາ ພວກເຮົາບໍ່ໄດ້ເປັນໜີ້ຝ່າຍເນື້ອໜັງແຕ່ເປັນໜີ້ຝ່າຍພຣະວິນຍານ ເຈົ້າທັງຫຼາຍດຳເນີນຊີວິດຕາມຝ່າຍເນື້ອໜັງພວກເຈົ້າຄົງຈະຕາຍແຕ່ຖ້າໂດຍຣິດພຣະວິນຍານ ພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອໜັງເສັຽເຈົ້າຄົງຈະມີຊີວິດຢູ່.

3. **<u>ພຣະວິນຍານຂອງພຣະເຈົ້າຢືນຢັນວ່າເຮົາເປັນລູກຂອງພຣະອົງ:</u>** ( ໂຣມ 8:14–17 )

ພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ນຳພາຜູ້ທີ່ເຊື່ອໄປເຖິງຄວາມບໍຣິສຸດແລະເສຣີພາບ ເຫດວ່າທີ່ມີນິສັຍຢ່າງຂ້ອຍຂ້າຊຶ່ງນຳເຖິງຄວາມຢ້ານກົວແຕ່ພວກເຈົ້າໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ. ຄວາມຄິດທີ່ຄິດວ່າທຸກຄົນທີ່ເປັນລູກຂອງພຣະເຈົ້ານັ້ນເປັນຄວາມຄິດທີ່ຜິດ ທີ່ກາຍມາເປັນລູກຂອງພຣະເຈົ້ານັ້ນແມ່ນໂດຍການບັງເກີດໃໝ່ຂອງພວກເຮົາ ພຣະເຈົ້າໄດ້ຖອກເທພຣະພອນອັນໃຫຍ່ຫລວງໃຫ້ພວກເຮົາຄື:ຄວາມລອດພົ້ນ,ຜູ້ຮັບມໍຣະດົກແນ່ນອນ,

ດ້ວຍພຣະວິນຍານບໍຣິສຸດເຮັດໃຫ້ພວກເຮົາເຂົ້າໄປເຖິງຄອບຄົວຂອງພຣະເຈົ້າແລະໃຫ້ເຮົາທັງຫລາຍໄດ້ເອີ້ນພຣະເຈົ້າວ່າ:“ ອັບບາ” ຄືພຣະບິດາ ພຣະວິນຍານບໍຣິສຸດໄດ້ເຮັດໃຫ້ລູກຂອງພຣະເຈົ້າສາມາດຮ້ອງພຣະບິດາເໝືອນກັບເດັດນ້ອຍທີ່ຢູ່ໃນອ້ອມອົກຂອງພໍ່ແມ່. ຝ່າຍພຣະວິນຍານນັ້ນຊົງຮ່ວມເປັນພະຍານກັບວິນຍານຂອງເຮົາທັງຫຼາຍວ່າພວກເຮົາເປັນບຸດຂອງພຣະເຈົ້າ ພຣະອົງໄດ້ເຮັດໃຫ້ເຮົາເປັນຜູ້ໄດ້ຮັບມໍຣະດົກຂອງພຣະອົງພວກເຮົາບໍ່ພຽງແຕ່ໄດ້ຮັບມໍຣະດົກຂອງພຣະອົງເທົ່ານັ້ນ ພວກເຮົາຍັງຊົມຊື່ນຍິນດີນຳໃນພຣະອົງອີກດ້ວຍ ຄຳວ່າຜູ້ຮ່ວມມໍຣະດົກກັບພຣະຄຣິດນັ້ນໝາຍຄວາມວ່າຜູ້ທີ່ເຊື່ອໄດ້ກາຍມາເປັນຜູ້ຮັບມໍຣະດົກຂອງພຣະເຈົ້າ, ມີແຕ່ຮ່ວມກັບພຣະຄຣິດຈະໄດ້ມໍຣະດົກອັນແທ້ຈິງ.

ອາຈານໂປໂລໄດ້ໜູນໃຈພວກເຮົາທັງຫຼາຍວ່າຜູ້ທີ່ໄດ້ທົນທຸກທໍຣະມານດ້ວຍກັນກັບພຣະອົງນັ້ນພວກເຮົາກໍຈະໄດ້ຮັບສະງ່າຣາສີກັບພຣະອົງນັ້ນເໝືອນກັນ.

**<u>4.ພຣະວິນຍານບໍຣິສຸດຊ່ອຍເຮົາອະທິຖານ.</u>** ( ໂຣມ 8:26-27 )

ພຣະວິນຍານບໍຣິສຸດໄດ້ຊົງຊ່ວຍເຮົາໃນການອະທິຖານໃນເມື່ອພວກເຮົາອ່ອນກຳລັງແລະບໍ່ຮູ້ວ່າຈະອະທິຖານແບບໃດຕາມ ທຳມະດາແລ້ວ ຜູ້ທີ່ເຊື່ອຄວນຈະຮູ້ວ່າຈະອະທິຖານແບບໃດ ຫຼາຍເທື່ອພວກເຮົາບໍ່ຮູ້ ແຕ່ວ່າໃນທຳນອງດຽວກັນ ພຣະວິນຍານບໍຣິສຸດໄດ້ເຮັດໃຫ້ຄຳອາທິຖານຂອງເຮົາເກີດຜົນຫຼືເປັນໄປໄດ້ຕາມພຣະຄຳ. ດັ່ງນັ້ນການອະທິຖານຂອງເຮົາຖ້າປາສຈາກພຣະວິນຍານບໍຣິສຸດກໍຈະບໍ່ເກີດຜົນ.

ພຣະວິນຍານບໍຣິສຸດບໍ່ພຽງແຕ່ຈະອະທິຖານນຳເຮົາແລະຍັງອະທິຖານເພື່ອພວກເຮົານຳ ທ່ານຊົງຊ່ອຍຂໍແທນເຮົາໂດຍການທີ່ບໍ່ເວົ້າຈັກຄຳ.ພຣະວິນຍານອ້ອນວອນຂໍເພື່ອຄົນທີ່ເຊື່ອທັງຫຼາຍຄ້າຍຄືກັບມະນຸດເຮົາທີ່ສະແດງເຖິງຄວາມຫ່ວງໃຍຝ່າຍຈິດໃຈ.ພຣະວິນຍານບໍຣິສຸດຍັງສອດສ່ອງຮູ້ໃຈຂອງຜູ້ອະທິຖານໂດຍບໍ່ເວົ້າອອກມາແມ່ນແຕ່ຄຳດຽວ. ດັ່ງນັ້ນການອະທິຖານຈຶ່ງບໍ່ເປັນບັນຫາບໍ່ວ່າຈະເປັນພາສາຊາດໃດ.?

ພຣະວິນຍານອ້ອນວອນຂໍໃຫ້ກັບທຸກໆຄົນ,ໃຊ້ຄຳເວົ້າທີ່ວ່າພວກເຮົາ ອາຈານໂປໂລໄດ້ຮ່ວມເອົາທັງຕົວຂອງເພິ່ນແລະທຸກໆຄົນທີ່ຕ້ອງການອະທິຖານ, ພຣະວິນຍານບໍຣິສຸດຊົງຊາບໃນທຸກສິ່ງທີ່ເຮົາຕ້ອງການ ເມື່ອພວກເຮົາບໍ່ຮູ້ຈະອ້ອນວອນອະທິຖານສຳລັບສິ່ງທີ່ເຮົາຕ້ອງການ, ພຣະເຈົ້າຢັ່ງຮູ້ເຖິງຈິດໃຈຂອງເຮົາແລະຮູ້ເຖິງຄວາມຄິດຂອງເຮົາ,

ພຣະວິນຍານບໍຣິສຸດນຳພາການອະທິຖານປາກົດຜົນເປັນຈິງ, ຄຳອ້ອນວອນຂອງຜູ້ອ້ອນວອນອະທິຖານຈະບັງເກີດຜົນເປັນຈິງຈາກການຮູ້ຈັກກັບພຣະເຈົ້າຢ່າງແນ່ໃຈ. ອົງພຣະເຢຊູຄຣິດໄດ້ສອນອັກຄະສາວົກໃນການອະທິຖານຕາມແບບຢ່າງຂອງພຣະອົງເອງ ພຣະວິນຍານບໍຣິສຸດ ແມ່ນພຣະວິນຍານຂອງພຣະຄຣິດແລະພຣະວິນຍານຂອງພຣະເຈົ້າເຂົ້າໃຈເຖິງພຣະປະສົງຂອງພຣະເຈົ້າຢ່າງຖືກຕ້ອງແນ່ນນອນ.ຄຳອະທິຖານຂອງເພິ່ນກໍເປັນອັນນຶ່ງອັນດຽວກັນກັບ

ພຣະປະສົງຂອງພຣະເຈົ້າ.

ພຣະວິນຍານບໍຣິສຸດອ້ອນວອນສະເພາະເຈາະຈົງ. ພຣະອົງໄດ້ອ້ອນວອນເມື່ອນັກທັມບັນດິດ.ນັກທັມບັນດິດບໍ່ແມ່ນເປັນຄົນທີ່ບໍຣິສຸດ ນັກທັມບາງຄົນທີ່ບໍ່ມີຄວາມເຊື່ອກໍບໍ່ໄດ້ຮັບຄວາມຊົມຊື່ນຍິນດີຄວາມອ້ອນວອນຂໍຂອງພຣະວິນຍານບໍຣິສຸດ. ການຮູ້ຈັກພຣະວິນບານຂອງພຣະເຈົ້າ (ໂຣມ 8:26) ແມ່ນເຮັດໃຫ້ພຣະວິນຍານອ້ອນວອນຂໍໃຫ້ສໍາລັບເຮົາ, ທັງນໍາພາເຮົາໃຫ້ເຂົ້າໃກ້ພຣະບັນລັງຂອງພຣະເຈົ້າ.

## ບົດຮຽນແຫ່ງຊີວິດ

ພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ສອນຜູ້ທີ່ເຊື່ອໃນຫຼາຍວິທີທາງແຕ່ກຕ່າງກັບ.ແຕ່ລະວິທີທາງລ້ວນແຕ່ມີຄວາມສໍາຄັນຄື.

1. ພຣະວິນຍານໄດ້ນໍາພາພວກເຮົາໃຫ້ດໍາເນີນຊີວິດໃຫ້ບໍຣິສຸດ ບໍ່ດໍາເນີນຊີວິດຕາມຝ່າຍເນື້ອໜັງ(ຂໍ້14)
2. ພຣະອົງຊົງປົ່ງນວິນຍານທີ່ມີນິສັຍຢ່າງຂ້ອຍຂ້າແລະຢ້ານກົວໃຫ້ໄດ້ຮັບຄວາມອິສຣະພາບທີ່ຈະມີຄວາມສໍາພັນອັນດີກັບພຣະອົງ.(ຂໍ້15)
3. ພຣະເຈົ້າໃຫ້ເຮົາທັງຫຼາຍເອີ້ນພຣະອົງວ່າ “ ອັບບາ ” (ແປວ່າ ພຣະບິດາ)ສະແດງໃຫ້ພວກເຮົາຮູ້ວ່າພວກເຮົາເປັນບຸດຂອງພຣະເຈົ້າ(ຂໍ້15-16).
4. ພຣະອົງໃຫ້ເຮົາທັງຫຼາຍມີສ່ວນຮັບມໍຣະກົດແລະກໍຮັບສະງ່າຣາສີກັບພຣະຄຣິດ(ຂໍ້17)
5. ພຣະອົງຊ່ວຍຊູເຮົາທັງຫຼາຍເມື່ອພວກເຮົາອ້ອນວອນແລະພຣະອົງຊົງຊ່ວຍຂໍແທນພວກເຮົາ(ຂໍ້26-27).

- ພວກເຮົາຈະສາມາດເຮັດໃຫ້ຣິດອໍານາດຂອງພຣະວິນຍານຂອງພຣະເຈົ້າປດກົດເດັ່ນໄດ້ແນວໃດ ?
- ພວກເຮົາສາມາດຮ່ວມກັບພຣະວິນຍານບໍຣິສຸດ ນໍາພາເຮົາດໍາເນີນຊີວິດຢູ່ດ້ວຍຄວາມຊອບທັມ.
- ພວກເຮົາສາມາດຍອມໃຫ້ຣິດອໍານາດຂອງພຣະວິນຍານບໍຣິສຸດນໍາພາໃຫ້ດໍາເນີນຊີວິດຕາມພຣະປະສົງຂອງພຣະເຈົ້າ.
- ພວກເຮົາສາມາດຕ້ອນຮັບເອົາວິນຍານທີ່ຊົງຮ່ວມເປັນພະຍານກັບເຮົາວ່າພວກເຮົາເປັນບຸດຂອງພຣະເຈົ້າ.
- ພວກເຮົາສາມາດຮັບພຣະວິນຍານທີ່ຊ່ວຍເຮົາໃນການອ້ອນວອນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by LLBC**